**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ ເລກທີ 277/ສສກ

ນະຄອນຫຼວງວຽງຈັນ, ວັນທີ 25 ມີນາ 2022

# ມະຕິ

## ກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ທົ່ວປະເທດ ປະຈຳປີ 2021 ຄັ້ງວັນທີ 10 ມີນາ 2022 ທີ່ນະຄອນຫຼວງວຽງຈັນ (ໃນຮູບແບບປະຊຸມກັບທີ່ ແລະ ທາງໄກ)

ກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ທົ່ວປະເທດ ປະຈຳປີ 2021 ໄດ້ຈັດຂຶ້ນໃນວັນທີ 10 ມີນາ 2022, ທີ່ນະຄອນຫຼວງວຽງຈັນໃນຮູບແບບປະຊຸມກັບທີ່ ແລະ ທາງໄກຢູ່ກະຊວງສຶກສາທິການ ແລະ ກິລາ ພາຍໃຕ້ການເປັນປະທານຂອງ ທ່ານ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ໂດຍມີ ທ່ານຮອງປະທານກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ ແລະ ບັນດາທ່ານຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນປະທານຮ່ວມ. ໃຫ້ກຽດເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ມີບັນດາທ່ານອະດີດຮອງລັດຖະມົນຕີ, ທ່ານອະທິການບໍດີຈາກ 4 ມະຫາວິທະຍາໄລ, ທ່ານຜູ້ຕາງໜ້າບັນດາກະຊວງກ່ຽວຂ້ອງ, ບັນດາທ່ານຫົວໜ້າ/ຮອງຫົວໜ້າຫ້ອງການ, ຫົວໜ້າກົມ/ຮອງຫົວໜ້າກົມ ແລະ ອົງການທຽບເທົ່າກົມ, ຜູ້ອຳນວຍການສະຖາບັນ, ສູນ ຈາກກະຊວງສຶກສາທິການ ແລະ ກິລາ. ນອກຈາກນັ້ນ, ໃນສະພາບວິຖີຊີວິດປົກກະຕິແບບໃໝ່ນີ້, ມີບັນດາທ່ານຜູ້ບໍລິຫານການສຶກສາ ແລະ ກິລາຂັ້ນແຂວງ/ນະຄອນຫຼວງ, ຂັ້ນເມືອງ/ນະຄອນ, ຜູ້ບໍລິຫານສະຖານການສຶກສາຈຳນວນໜຶ່ງ ໃນຂອບເຂດທົ່ວປະເທດໄດ້ເຂົ້າຮ່ວມຜ່ານຮູບແບບທາງໄກ ເຂົ້າຮ່ວມທັງໝົດ 190 ທ່ານ, ຍິງ 32 ທ່ານ.

ກອງປະຊຸມໄດ້ຮັບຟັງ ແລະ ມີຄຳເຫັນການສະຫຼູບລາຍງານຜົນສຳເລັດ ຂອງການຈັດຕັ້ງປະຕິບັດ ແຜນພັດທະນາການສຶກສາ ແລະ ກິລາ ປະຈຳປີ 2021 ຂອງ 11 ຂະແໜງການຍ່ອຍ ລວມທັງບັນຫາ, ສິ່ງທ້າທາຍ ແລະ ແຜນວຽກບູລິມະສິດສຳລັບປີ 2022, ຕໍ່ມາດຕະການຜັນຂະຫຍາຍ ຜົນຂອງການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມປະຈຳປີ 2020, ທິດທາງຜັນຂະຫຍາຍ ຜົນຂອງກອງປະຊຸມໂຕະມົນລະດັບສູງຄັ້ງທີ 13 ແລະ ເນື້ອໃນເອກະສານທີ່ສຳຄັນ ຕິດພັນກັບຂະແໜງການຍ່ອຍຈຳນວນໜຶ່ງ.

ຜ່ານການຮັບຟັງ, ຄົ້ນຄວ້າ ແລະ ປະກອບຄຳເຫັນຢ່າງກວ້າງຂວາງ ແລະ ສ້າງສັນ ຕໍ່ບົດລາຍງານຕ່າງໆ, ກອງປະຊຸມເຫັນດີເປັນເອກະພາບຕົກລົງ ແລະ ຮັບຮອງເອົາເປັນມະຕິຂອງກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາທົ່ວປະເທດປະຈຳປີ 2021 ເພື່ອໃຫ້ເປັນບ່ອນອີງ ແລະ ທິດທາງໃນການຈັດຕັ້ງປະຕິບັດ, ດັ່ງມີລາຍລະອຽດລຸ່ມນີ້:

1. ຮັບຮອງເອົາບົດສະຫຼູບກ່ຽວກັບຜົນສຳເລັດ ໃນການຈັດຕັ້ງປະຕິບັດ ແຜນພັດທະນາການສຶກສາ ແລະ ກິລາ ປະຈຳປີ 2021 ແລະ ແຜນການປະຈຳປີ 2022 ຂອງແຕ່ລະຂະແໜງການຍ່ອຍ. ພ້ອມທັງມອບໃຫ້ແຕ່ລະຂະແໜງການຍ່ອຍສ້າງເປັນແຜນບູລິມະສິດສຳລັບປີ 2022 ໂດຍກຳນົດມາດຕະການໃນການແກ້ໄຂບັນດາບັນຫາ ແລະ ຂໍ້ຄົງຄ້າງໃນປີຜ່ານມາ ແລະ ຜັນຂະຫຍາຍເປັນແຜນວຽກຈຸດສຸມ ຂອງຕົນໃຫ້ສອດຄ່ອງກັບແຜນວຽກບູລິມະສິດ ແລະ ແຜນງົບປະມານທີ່ໄດ້ຮັບອະນຸມັດ ຢ່າງມີປະສິດທິຜົນ;

2. ມອບໃຫ້ກົມການສຶກສາກ່ອນໄວຮຽນ ສືບຕໍ່ສົມທົບກັບກົມສ້າງຄູ, ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ສ້າງຄວາມເຂັ້ມແຂງໃຫ້ແກ່ວິຊາການຂະແໜງການສຶກສາກ່ອນໄວຮຽນຂັ້ນແຂວງ, ວິຊາການໜ່ວຍງານການສຶກສາກ່ອນໄວຮຽນຂັ້ນເມືອງ ແລະ ກຸ່ມໂຮງຮຽນ ໃນການນິເທດການສຶກສາກ່ອນໄວຮຽນ;
3. ມອບໃຫ້ກົມການສຶກສາກ່ອນໄວຮຽນ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທົບທວນ ແລະ ປັບປຸງຫຼັກສູດການສຶກສາກ່ອນໄວຮຽນ;
4. ມອບໃຫ້ກົມສາມັນສຶກສາ ສຶກສາຄວາມເປັນໄປໄດ້ ໃນການປະຕິຮູບລະບົບການສຶກສາ ສາຍສາມັນສຶກສາລວມທັງການແຍກສາຍໃນຊັ້ນມັດທະຍົມສຶກສາຕອນປາຍ;
5. ມອບໃຫ້ກົມສາມັນສຶກສາ ແລະ ກົມສ້າງຄູ ສົມທົບກັບວິທະຍາໄລຄູ ແລະ ພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ຄູສອນ ໃນການນຳໃຊ້ຫຼັກສູດໃໝ່ ເພື່ອປັບປຸງຜົນການຮຽນຂອງນັກຮຽນ ໃຫ້ດີຂຶ້ນໂດຍສະເພາະ ວິຊາພາສາລາວ ແລະ ຄະນິດສາດ;
6. ມອບໃຫ້ກົມສາມັນສຶກສາ ສືບຕໍ່ສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງໃນການປັບປຸງ ແລະ ສ້າງນິຕິກຳ ແລະ ຫຼັກສູດສາມັນວິຊາຊີບ ເພື່ອໃຫ້ສອດຄ່ອງກັບທ່າແຮງຂອງແຕ່ລະແຂວງ;
7. ມອບໃຫ້ກົມອາຊີວະສຶກສາ ແລະ ກົມສາມັນສຶກສາ ຮ່ວມກັນສ້າງນິຕິກຳຄຸ້ມຄອງໂຮງຮຽນສາມັນວິຊາຊີບພ້ອມທັງພັດທະນາຫຼັກສູດ ແລະ ສື່ການຮຽນ-ການສອນໃຫ້ແກ່ໂຮງຮຽນມັດທະຍົມວິຊາຊີບຕົວແບບມິດ ຕະພາບລາວ-ຫວຽດນາມ ທີ່ແຂວງຄຳມ່ວນ;
8. ມອບໃຫ້ກົມການສຶກສານອກໂຮງຮຽນ ສືບຕໍ່ສົມທົບກັບກົມສາມັນສຶກສາ ສ້າງນິຕິກຳກ່ຽວກັບການຮ່ວມມື ແລະ ນຳໃຊ້ຊັບພະຍາກອນຮ່ວມກັນ ລະຫວ່າງ ສູນການສຶກສານອກໂຮງຮຽນ ແລະ ກຸ່ມໂຮງຮຽນ ໃນການຝຶກອົບຮົມວິຊາຊີບຂັ້ນພື້ນຖານ, ການບຳລຸງ, ຍົກລະດັບການສຶກສາໃຫ້ກັບກຸ່ມເປົ້າໝາຍທີ່ດ້ອຍໂອກາດ ແລະ ພາດໂອກາດໃຫ້ສຳເລັດ;
9. ມອບໃຫ້ ກົມສ້າງຄູ ກະກຽມການສ້າງຕັ້ງມະຫາວິທະຍາໄລສ້າງຄູ ແລະ ການສ້າງຄູທົດແທນ;
10. ມອບໃຫ້ກົມການສຶກສາຊັ້ນສູງ ສົມທົບກັບຂະແໜງການຍ່ອຍວິທະຍາສາດ ກຳນົດມາດຕະການຊຸກຍູ້, ສົ່ງເສີມການພັດທະນາ ຊັບພະຍາກອນມະນຸດທີ່ມີຄຸນນະພາບ ແລະ ການຄົ້ນຄວ້າວິທະຍາສາດທີ່ເນັ້ນໃສ່ການສ້າງນະວັດຕະກຳໃໝ່; ສົ່ງເສີມການບໍລິການດ້ານວິຊາການ ເພື່ອຮັບໃຊ້ການພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດ;
11. ມອບໃຫ້ກົມການສຶກສາຊັ້ນສູງ ເອົາໃຈໃສ່ຊີ້ນຳມະຫາວິທະຍາໄລແຫ່ງຊາດ ຄົ້ນຄວ້າວິໄຈທ່າແຮງ ໃນການເຮັດການທົດລອງ ການຫັນເປັນຫົວໜ່ວຍກຸ້ມຕົນເອງ ໃນການຄຸ້ມຄອງທາງດ້ານການເງິນ ເທື່ອລະກ້າວ;
12. ມອບໃຫ້ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ຄົ້ນຄວ້າມາດຕະການໃນການຈັດຕັ້ງປະຕິບັດເພື່ອໃຫ້ບັນລຸຄາດໝາຍລວມ 2021 – 2025 ແລະ ຄາດໝາຍສະເພາະໃນປີ 2022 ຂອງວຽກງານກິລາ - ກາຍຍະກຳມວນຊົນ, ພະລະ ແລະ ສິລະປະສຶກສາ ໃຫ້ສອດຄ່ອງກັບແຜນພັດທະນາຂອງແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025) ແລະ ຊຸກຍູ້ດ້ວຍການອອກນິຕິກຳ ໃນການຈັດຕັ້ງຂະບວນການແຂ່ງຂັນກິລາ ກາຍຍະກຳມວນຊົນ ໃນສະຖານການສຶກສາ ທຸກຊັ້ນ ທຸກສາຍ;
13. ມອບໃຫ້ກົມກິລາລະດັບສູງ ກຳນົດທິດທາງໃນການສ້າງແຜນ ກະກຽມນັກກິລາເພື່ອການແຂ່ງຂັນ ໃນສະພາບວິຖີຊີວິດປົກກະຕິແບບໃໝ່ (New normal) ແລະ ຊຸກຍູ້ ດ້ວຍການອອກນິຕິກຳໃນການຈັດຕັ້ງຂະບວນແຂ່ງຂັນ ກິລາປະເພດຕ່າງໆຂອງບັນດາກະຊວງ, ອົງການ ແລະ ບັນດາແຂວງ/ນະຄອນຫຼວງ ເພື່ອໃຫ້ມີນັກກິລາທີ່ເກັ່ງ ແລະ ມີຄວາມພ້ອມ;
14. ມອບໃຫ້ຫ້ອງການກະຊວງສຶກສາທິການ ແລະ ກິລາ ໂດຍສະເພາະຄະນະປະສານງານ ແລະ ຄະນະສຳຫຼວດຂໍ້ມູນເບື້ອງຕົ້ນໂຄງການປັບປຸງສະໜາມກິລາເຈົ້າອະນຸວົງ ສືບຕໍ່ສົມທົບກັບຄະນະຊ່ຽວຊານຝ່າຍຍີ່ປຸ່ນ ເພື່ອຮ່ວມກັນອອກແບບ ແລະ ຍາດແຍ່ງການຊ່ວຍເຫຼືອ ຈາກລັດຖະບານຍີ່ປຸ່ນ ຕາມທິດຊີ້ນຳຂອງລັດຖະບານ;

15. ມອບໃຫ້ກົມຈັດຕັ້ງ ແລະ ພະນັກງານ ສົມທົບກັບພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ວິເຄາະສະພາບການບັນຈຸຄູໂດຍນໍາໃຊ້ຂໍ້ມູນຈາກຖານຂໍ້ມູນທີ່ມີ ເພື່ອເປັນບ່ອນອີງໃນການສ້າງແຜນຄວາມຕ້ອງການຄູໃນສະເພາະໜ້າ ແລະ ຍາວນານ;
16. ມອບໃຫ້ກົມຈັດຕັ້ງ ແລະ ພະນັກງານ ຄົ້ນຄວ້າ ແລະ ກໍານົດລະບຽບການກ່ຽວກັບອາລະດໍາລົງຕໍາແໜ່ງ (ສະບັບໃໝ່) ຂອງຜູ້ອໍານວຍການ ໂຮງຮຽນສາມັນສຶກສາ;
17. ມອບໃຫ້ກົມຈັດຕັ້ງ ແລະ ພະນັກງານ ສືບຕໍ່ສົມທົບກັບກະຊວງພາຍໃນ ເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ດໍາລັດວ່າດ້ວຍການກໍານົດຕໍາແໜ່ງງານ ເລກທີ 734/ລບ, ລົງວັນທີ 31 ທັນວາ 2021 ໃຫ້ປະກົດຜົນເປັນຈິງ; ພ້ອມທັງສົມທົບກັບບັນດາກົມ, ສູນ, ຫ້ອງການ ແລະ ສະຖາບັນ ດໍາເນີນການກໍານົດຕໍາແໜ່ງງານ ແລະ ປັບປຸງກົງຈັກການຈັດຕັ້ງທັງຂັ້ນສູນກາງ ແລະ ທ້ອງຖິ່ນ ບົນພື້ນຖານຂອງດໍາລັດດັ່ງກ່າວ; ໃຫ້ບັນດາກົມຕ່າງໆ ສົມທົບກັບກົມປະກັນຄຸນນະພາບການສຶກສາ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໃນການສ້າງ ແລະ ປັບປຸງບັນດານິຕິກໍາໃນການຄຸ້ມຄອງວຽກງານຂອງຕົນ ໃຫ້ຄ່ອງຕົວ ແລະ ຮັດກຸມ;
18. ໃຫ້ບັນດາກົມທີ່ມີຖານຂໍ້ມູນ ພັດທະນາ ແລະ ປັບປຸງຖານຂໍ້ມູນຂອງຕົນໃຫ້ທັນສະໄໝ, ທັນກັບສະພາບການ, ມີຄວາມຖືກຕ້ອງ ແລະ ຊັດເຈນ ເພື່ອໃຫ້ເປັນແຫຼ່ງຂໍ້ມູນອ້າງອີງທີ່ສໍາຄັນໃນການພັດທະນານະໂຍບາຍດ້ານການສຶກສາ, ວິທະຍາສາດ ແລະ ກິລາ;
19. ມອບໃຫ້ຂະແໜງການຍ່ອຍວິທະຍາສາດ ສືບຕໍ່ປັບປຸງການຈັດຕັ້ງໃຫ້ສໍາເລັດ; ສ້າງ ແລະ ປັບປຸງຍຸດທະສາດ ແລະ ນິຕິກໍາ, ການຄົ້ນຄວ້າ, ບໍລິການ, ການຮ່ວມມືພາຍໃນ ແລະ ສາກົນ ທີ່ກ່ຽວຂ້ອງກັບວຽກງານວິທະຍາສາດ ຕາມບົດລາຍງານທິດທາງການປັບປຸງວຽກງານວິທະຍາສາດ ໃນອະນາຄົດ; ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສ້າງຊັບພະຍາກອນມະນຸດ ແລະ ພື້ນຖານໂຄງລ່າງ, ສ້າງຈິດສໍານຶກໂຄສະນາເຜີຍແຜ່ ແລະ ຈັດກິດຈະກໍາການແຂ່ງຂັນຜົນງານນັກວິທະຍາສາດ, ເຕັກໂນໂລຊີ, ວິສະວະກໍາສາດ ແລະ ຄະນິດສາດ ເພື່ອເປັນການສົ່ງເສີມໃຫ້ນັກຮຽນທີ່ເຂົ້າຮຽນມະຫາວິທະຍາໄລ ໄດ້ເຂົ້າຮຽນສາຍວິຊາດັ່ງກ່າວເພີ່ມຂຶ້ນ;
20. ມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ໂດຍສົມທົບກັບຄະນະກໍາມະການແຜນການ ແລະ ການເງິນ ແລະ ຄະນະກໍາມະການຈັດສັນຄູຂັ້ນສູນກາງ ສ້າງຕັ້ງຄະນະກໍາມະການແຜນການ ແລະ ການເງິນ ແລະ ຄະນະກໍາມະການຈັດສັນຄູ ໃນຂັ້ນແຂວງ/ນະຄອນຫຼວງ ໂດຍໃຫ້ມີໂຄງຮ່າງຄະນະຮັບຜິດຊອບ ແລະ ພາລະບົດບາດທີ່ເໝາະສົມ ແລະ ສອດຄ່ອງກັບການເຮັດວຽກຕົວຈິງຂອງຂັ້ນທ້ອງຖິ່ນ;
21. ມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ສືບຕໍ່ຈັດກອງປະຊຸມໃນໄລຍະພັກສົ້ນປີຮຽນ ໂດຍໃຫ້ເນັ້ນໃສ່ການເຜີຍແຜ່ມະຕິຄໍາສັ່ງຂອງລັດຖະບານ ກໍຄື ຂອງກະຊວງສຶກສາທິການ ແລະ ກິລາ ລວມທັງໃຫ້ເນັ້ນໃສ່ການສຶກສາອົບຮົມການເມືອງແນວຄິດ ແລະ ຈັນຍາບັນ, ຈັນຍາທໍາຂອງຜູ້ບໍລິຫານ ແລະ ຄູອາຈານດ້ວຍຫຼາຍວິທີ ໃຫ້ເລິກເຊິ່ງ, ກວ້າງຂວາງ ແລະ ທົ່ວເຖິງ;
22. ໃຫ້ທຸກພາກສ່ວນສືບຕໍ່ ສ້າງຄວາມເຂັ້ມແຂງຂອງລະບົບການບໍລິຫານ ແລະ ຄຸ້ມຄອງ ລວມທັງການຄຸ້ມຄອງບຸກຄະລາກອນ, ງົບປະມານເພື່ອໃຫ້ການນໍາໃຊ້ ຊັບພະຍາກອນຕ່າງໆທີ່ມີຈໍາກັດ ໃຫ້ເກີດປະໂຫຍດສູງສຸດ;
23. ໃຫ້ທຸກພາກສ່ວນທັງຂັ້ນສູນກາງ ແລະ ທ້ອງຖິ່ນ ເອົາໃຈໃສ່ຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍມາດຕະການປະຢັດການໃຊ້ຈ່າຍງົບປະມານຂອງລັດ ໃນຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ຢ່າງເຂັ້ມງວດ ແລະ ມີປະສິດທິຜົນສູງ;
24. ມອບໃຫ້ຫ້ອງການ ກະຊວງສຶກສາທິການ ແລະ ກິລາ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຮ່າງດໍາລັດວ່າດ້ວຍການສຶກສາພາກເອກະຊົນ;
25. ມອບໃຫ້ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ຄົ້ນຄວ້ານິຕິກໍາ ແລະ ຫຼັກການກ່ຽວກັບນໍາໃຊ້ພາສາລາວ ຕາມການມອບໝາຍ ຂອງລັດຖະບານ;

26. ມອບໃຫ້ຄະນະສະເພາະກິດ ປ້ອງກັນ ແລະ ຄວບຄຸມ ການແພ່ລະບາດ ຂອງພະຍາດ ໂຄວິດ-19 ແຕ່ລະຂັ້ນ ສືບຕໍ່ລົງຕິດຕາມ ການປະຕິບັດ 10 ມາດຕະການ ແລະ 40 ຂໍ້ແນະນຳ ໃນການເປີດຮຽນ ແບບເຊິ່ງໜ້າຢູ່ ສະຖານການສຶກສາ ທຸກຂັ້ນ ແລະ ທຸກສາຍໃນຄວາມຮັບຜິດຊອບຂອງຕົນ;

27. ໃຫ້ບັນດາກົມ, ຫ້ອງການ, ສູນ ແລະ ສະຖາບັນອ້ອມຂ້າງກະຊວງສຶກສາທິການ ແລະ ກິລາ ແລະ ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ນຳເອົາມະຕິກອງປະຊຸມຜູ້ບໍລິຫານການສຶກສາ ປະຈຳປີ 2021 ໄປເຜີຍແຜ່ໃຫ້ແກ່ພະນັກງານ ແລະ ຄູອາຈານທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ, ພ້ອມທັງສ້າງເປັນແຜນຈັດຕັ້ງປະຕິບັດລະອຽດ ແລະ ແຜນຕິດຕາມ ການປະຕິບັດມະຕິເພື່ອໃຫ້ສາມາດລາຍງານຄວາມຄືບໜ້າໄດ້ໃນແຕ່ລະໄຕມາດ;

28. ມອບໃຫ້ກົມກວດກາສ້າງຄວາມເຂັ້ມແຂງໃນການສ້າງເຄື່ອງມືຕິດຕາມ ແລະ ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາທິການ ແລະ ກິລາ ປະຈຳໄຕມາດ, ປະຈຳປີ ແລະ ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດມະຕິກອງປະຊຸມບໍລິການການສຶກສາ ແລະ ກິລາທົ່ວປະເທດ.

ກອງປະຊຸມໄດ້ປິດລົງໃນເວລາ 17:00 ໂມງ ຂອງວັນທີ 10 ມີນາ 2022 ໂດຍໃຫ້ກຽດກ່າວປິດ ໂດຍທ່ານ ຣສ. ປອ. ພຸດ ສິມມາລາວົງ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ.

ລັດຖະມົນຕີ

ຣສ.ປອ ພຸດ ສິມມາລາວົງ